


<u>ພຣະຄຳພີບອກວ່າມີທາງໄປສູ່ຟ້າສະຫວັນພຽງທາງດຽວ!</u>

ພຣະເຢຊູກ່າວວ່າ: "*ເຮົານີ້ແຫຼະເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ*" ໂຢຮັນ 14:6 ຜູ້ອື່ນຍົກໂທດບາບຂອງທ່ານບໍ່ໄດ້. ຈົ່ງເຊື່ອວາງໃຈໃນພຣະເຢຊູວັນນີ້: <u>1</u> ຍອມຮັບວ່າທ່ານເປັນຄົນບາບ ໂຣມ 3:10. <u>2</u> ຈົ່ງເຕັມໃຈຫັນຫລັງໃຫ້ຄວາມບາບ(ຄືກັບໃຈເສຍໃໝ່) ກິຈະການ 17:30. <u>3</u> ເຊື່ອວ່າພຣະເຢຊູຄຣິດໄດ້ຕາຍເພື່ອທ່ານ ຖືກຝັງແລະຟື້ນຄືນມາຈາກຄວາມຕາຍ. ໂຣມ 10:9-10. <u>4</u> ອະທິຖານເຊີນພຣະເຢຊູເຂົ້າມາໃນໃຈຂອງທ່ານເພື່ອໃຫ້ພຣະອົງເປັນພຣະຜູ້ຊ່ວຍໃຫ້ພົ້ນແລະເປັນພຣະເຈົ້າຂອງທ່ານ ໂຣມ 10:13.

ເຊີນອະທິຖານດັ່ງຕໍ່ໄປນີ້: "ຂ້າແດ່ພຣະເຈົ້າ ຂ້າພະອົງເປັນຄົນຜິດບາບແລະຕ້ອງການ ການຍົກໂທດບາບ ຂ້າພະອົງເຊື່ອວ່າພຣະເຢຊູຄຣິດໄດ້ຫລັ່ງພຣະໂລຫິດແລະຕາຍເທິງໄມ້ກາງແຂນເພື່ອໄຖ່ບາບຂອງຂ້າພະອົງ ຂ້າພະອົງຂໍກັບໃຈເສຍໃໝ່ແລະເຊີນພຣະອົງເຂົ້າມາເປັນພຣະຜູ້ຊ່ວຍໃຫ້ພົ້ນແລະເປັນພຣະເຈົ້າຂອງຂ້າພະອົງ".

ຖ້າທ່ານຮັບພຣະເຢຊູແລ້ວ ທ່ານກໍໄດ້ເລີ່ມຕົ້ນຊີວິດໃໝ່ກັບພຣະເຢຊູຄຣິດແລ້ວ. ໃນຊີວິດໃໝ່ນັ້ນທ່ານຄວນປະຕິບັດດັ່ງຕໍ່ໄປນີ້: <u>1</u> ອ່ານພຣະຄຳພີທຸກໆມື້ເພື່ອຈະໄດ້ຮູ້ພຣະເຢຊູຫຼາຍຂຶ້ນ. <u>2</u> ອະທິຖານລົມທະນາກັບພຣະເຈົ້າທຸກວັນ. <u>3</u> ຊອກຫາໂບດ(ວິຫານ) ຄຣິສຕະຈັກເພື່ອຮັບບັບຕິສະມາແລະຮ່ວມນະມັດສະການພຣະເຈົ້າແລະສຶກສາພຣະຄຳພີຮ່ວມກັນ. <u>4</u> ເລົ່າເລື່ອງການໄຖ່ບາບຂອງພຣະເຢຊູໃຫ້ຄົນອື່ນຟັງ. ຂໍພຣະເຈົ້າອວຍພອນທ່ານ!